ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ກະຊວງການເງິນ

ເລກທີ 1970/ກງ

ນະຄອນຫຼວງວຽງຈັນ, ວັນທີ 08 ກັນຍາ 2011

# ບົດແນະນຳ

## ວ່າດ້ວຍມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 08/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007;
- ອີງຕາມ ການສະເໜີຂອງກົມພາສີ ສະບັບເລກທີ 2456/ກພສ, ລົງວັນທີ 26 ສິງຫາ 2011.

ເພື່ອເປັນການຮັບປະກັນ ໃນການຈັດຕັ້ງຜັນຂະຫຍາຍ ແລະ ແນະນຳວິທີການກ່ຽວກັບການຈັດຕັ້ງປະຕິບັດມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

ລັດຖະມົນຕີວ່າການກະຊວງການເງິນ ອອກບົດແນະນຳ:

## ໝວດທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ບົດແນະນຳສະບັບນີ້ວາງອອກ ເພື່ອກຳນົດລະບຽບການ ແລະ ຂັ້ນຕອນກ່ຽວກັບມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີ.

**ມາດຕາ 2. ອະທິບາຍຄຳສັບ**

ບັນດາຄຳສັບໃນບົດແນະນຳສະບັບນີ້ ມີຄວາມໝາຍຄື:

1. **ເຈົ້າໜ້າທີ່ພາສີ** ໝາຍເຖິງ ພະນັກງານພາສີທີ່ຖືກແຕ່ງຕັ້ງ ໃຫ້ປະຕິບັດໜ້າທີ່ປະຈຳການ ຢູ່ດ່ານພາສີຊາຍແດນ, ປ້ອມພາສີ, ໜ່ວຍພາສີເຄື່ອນທີ່ ແລະ ວຽກງານສະເພາະກິດໃດໜຶ່ງຂອງພາສີ;
2. **ເຈົ້າຂອງສິດ ຫຼື ຜູ້ຖືສິດ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນພາຍໃນ ຫຼື ຕ່າງປະເທດ (ທີ່ໄດ້ຈົດທະບຽນ ຫຼື ບໍ່ຈົດທະບຽນ) ທີ່ໄດ້ຮັບການປົກປ້ອງສິດຕໍ່ຊັບສິດທາງປັນຍາໃດໜຶ່ງ ຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ;
3. **ເຈົ້າຂອງສິນຄ້າ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນພາຍໃນ ຫຼື ຕ່າງປະເທດທີ່ເປັນຜູ້ຮັບຜິດຊອບຕໍ່ສິນຄ້າ ຕາມການຖືກຳມະສິດ ຫຼື ຕາມການມອບໝາຍຂອງຜູ້ຖືກຳມະສິດ;
4. **ຜູ້ຮ້ອງຂໍ** ໝາຍເຖິງ ເຈົ້າຂອງສິດຜູ້ທີ່ໄດ້ຍື່ນໃບຄຳຮ້ອງຕໍ່ລັດຖະການພາສີ ເພື່ອກວດກາ ແລະ ຍຶດສິນຄ້າ;
5. **ການຍຶດ** ໝາຍເຖິງ ການຮັກສາສິນຄ້າ, ເຄື່ອງຂອງໄວ້ຊົ່ວຄາວ ເພື່ອລໍຖ້າຜົນຂອງການດຳເນີນຄະດີ;
6. **ສິນຄ້າທີ່ປອມແປງເຄື່ອງໝາຍການຄ້າ** ໝາຍເຖິງ ສິນຄ້າໃດໜຶ່ງ (ລວມທັງການຫຸ້ມຫໍ່) ທີ່ຕິດເຄື່ອງໝາຍການຄ້າ ໂດຍບໍ່ໄດ້ຮັບອະນຸຍາດທີ່ຄືກັນ ຫຼື ທີ່ບໍ່ສາມາດຈຳແນກຄວາມແຕກຕ່າງອັນສຳຄັນກັບເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນ ຢ່າງຖືກຕ້ອງຂອງສິນຄ້າດັ່ງກ່າວ ແລະ ຈະຖືວ່າເປັນການລະເມີດສິດຂອງເຈົ້າຂອງເຄື່ອງໝາຍການຄ້າດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ;
7. **ສິນຄ້າທີ່ລະເມີດລິຂະສິດ** ໝາຍເຖິງ ສິນຄ້າໃດໜຶ່ງທີ່ເປັນສຳເນົາເຮັດຂຶ້ນ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ ຫຼື ຈາກຜູ້ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ຈາກເຈົ້າຂອງສິດ ແລະ ສິນຄ້າໃດໜຶ່ງທີ່ເຮັດຂຶ້ນໂດຍກົງ ຫຼື ໂດຍທາງອ້ອມທີ່ຈະຖືເປັນການລະເມີດລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 3. ການປົກປ້ອງສິດຕໍ່ຊັບສິນທາງປັນຍາ**

ການປົກປ້ອງສິດຕໍ່ຊັບສິນທາງປັນຍາ ແມ່ນການນຳໃຊ້ມາດຕະການ ຕໍ່ຜູ້ລະເມີດສິດຕໍ່ຊັບສິນທາງປັນຍາ ບົນພື້ນຖານການຮ້ອງຂໍຂອງເຈົ້າຂອງສິດ ໂດຍປະຕິບັດຕາມລະບຽບ ແລະ ຂັ້ນຕອນທີ່ໄດ້ກຳນົດໄວ້ໃນບົດແນະນຳສະບັບນີ້. ການປົກປ້ອງສິດຕໍ່ຊັບສິນທາງປັນຍາ ພາຍໃຕ້ບົດແນະນຳສະບັບນີ້ ຈະບໍ່ນຳໃຊ້ຕໍ່ກັບການນຳເຂົ້າ ແລະ ການສົ່ງອອກສິນຄ້າຈຳນວນໜ້ອຍ ທີ່ບໍ່ມີລັກສະນະທາງການຄ້າ ແລະ ທີ່ບໍ່ເປັນອາຈິນ.

ບົດແນະນຳສະບັບນີ້ ກວມເອົາສະເພາະການຍຶດສິນຄ້າທີ່ປອມແປງເຄື່ອງໝາຍການຄ້າ ແລະ ສິນຄ້າທີ່ລະເມີດລິຂະສິດ.

## ໝວດທີ II

## ຂັ້ນຕອນຂອງການກວດກາ ແລະ ການຍຶດສິນຄ້າ

### ມາດຕາ 4. ສິດໃນການຮ້ອງຂໍໃຫ້ດຳເນີນການກວດກາ ແລະ ຍຶດສິນຄ້າ

ຖ້າເຈົ້າຂອງສິດມີຂໍ້ມູນທີ່ໜ້າເຊື່ອຖືໄດ້ ວ່າການນຳເຂົ້າ-ການສົ່ງອອກ ຫຼື ການຂົນສົ່ງສິນຄ້າຜ່ານແດນ ມີສິນຄ້າທີ່ລະເມີດເຄື່ອງໝາຍການຄ້າ ຫຼື ສິນຄ້າທີ່ລະເມີດລິຂະສິດຂອງຕົນ, ເຈົ້າຂອງສິດ ຫຼື ຜູ້ທີ່ໄດ້ຮັບມອບສິດ ສາມາດປະກອບຄຳຮ້ອງເປັນລາຍລັກອັກສອນ ແລ້ວຍື່ນຕໍ່ລັດຖະການພາສີ ເພື່ອຂໍໃຫ້ດຳເນີນການກວດກາ ແລະ ຍຶດສິນຄ້ານັ້ນ.

ໃນກໍລະນີຮີບດ່ວນທີ່ບໍ່ສາມາດແຈ້ງເປັນລາຍລັກອັກສອນໄດ້ ເຈົ້າຂອງສິດສາມາດແຈ້ງ ໂດຍປາກເປົ່າຕໍ່ລັດຖະການພາສີ ເພື່ອຂໍໃຫ້ດຳເນີນການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ.

### ມາດຕາ 5. ເງື່ອນໄຂຂອງການຮ້ອງຂໍ

ກ່ອນຈະມີການກວດກາ ແລະ ຍຶດສິນຄ້າ, ເຈົ້າຂອງສິດຕ້ອງປະກອບຄຳຮ້ອງດັ່ງລຸ່ມນີ້:

1. ໃບຄຳຮ້ອງ ຂໍຮ້ອງໃຫ້ມີການກວດກາ ແລະ ຍຶດສິນຄ້າຕາມແບບຟອມຂອງລັດຖະການພາສີ;
2. ຫຼັກຖານກ່ຽວກັບສິດຕໍ່ຊັບສິນທາງປັນຍາ ແລະ ຫຼັກຖານ ກ່ຽວກັບການລະເມີດຕໍ່ສິດດັ່ງກ່າວ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍຊັບສິນທາງປັນຍາ;
3. ລະບຸຊື່ບັນດາດ່ານ ຫຼື ບັນດາສະຖານທີ່ ບ່ອນທີ່ອາດຈະມີການນຳເຂົ້າ ຫຼື ສົ່ງອອກສິນຄ້າດັ່ງກ່າວ;
4. ລາຍລະອຽດຂອງສິນຄ້າ ເພື່ອຊ່ວຍໃຫ້ເຈົ້າໜ້າທີ່ສາມາດຮູ້ໄດ້ງ່າຍ;
5. ຂໍ້ມູນອື່ນໆ (ຖ້າມີ) ເຊັ່ນ: ຮູບພາບຂອງສິນຄ້າທີ່ລະເມີດ ແລະ ລາຍລະອຽດຂອງຜູ້ນຳເຂົ້າ-ສົ່ງອອກ ເພື່ອເປັນຂໍ້ມູນໃຫ້ແກ່ເຈົ້າໜ້າທີ່ພາສີ;
6. ຕ້ອງໄດ້ວາງເງິນຄ້ຳປະກັນເທົ່າກັບ 10.000.000 (ສິບລ້ານ) ກີບ ການຄ້ຳປະກັນສາມາດຄ້ຳປະກັນດ້ວຍເງິນສົດ, ດ້ວຍແຊັກ ຫຼື ໃບຄ້ຳປະກັນຈາກທະນາຄານ;
7. ເຊັນສັນຍາຮັບປະກັນສຳລັບການຊົດເຊີຍຄ່າໃຊ້ຈ່າຍຂອງລັດຖະການພາສີທີ່ອາດເກີດຈາກການຍຶດສິນຄ້າ;
8. ຄ່າທຳນຽມຍື່ນຄຳຮ້ອງ ແມ່ນໃຫ້ປະຕິບັດຕາມລະບຽບການ ທີ່ນຳໃຊ້ໃນແຕ່ລະໄລຍະ.

**ມາດຕາ 6. ສະຖານທີ່ຍື່ນຄຳຮ້ອງ**

ເຈົ້າຂອງສິດສາມາດຍື່ນຄຳຮ້ອງ ແລະ ເອກະສານຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 5 ຂອງບົດແນະນຳສະບັບນີ້ຢ່າງຖືກຕ້ອງ ແລະ ຄົບຖ້ວນຕໍ່ກົມພາສີ ຫຼື ພາສີປະຈຳເຂດ.

**ມາດຕາ 7. ການປະຕິເສດຄຳຮ້ອງ**

ພາຍຫຼັງທີ່ລັດຖະການພາສີ ໄດ້ຮັບຄຳຮ້ອງແລ້ວ ຕ້ອງທຳການກວດກາເອກະສານວ່າຖືກຕ້ອງຕາມລະບຽບການກຳນົດ ຫຼື ບໍ່, ພາຍໃນກຳນົດ 3 (ສາມ) ວັນ ໂດຍບໍ່ນັບວັນພັກທາງລັດຖະການ, ລັດຖະການພາສີ ຕ້ອງແຈ້ງຕອບຕໍ່ຜູ້ຍື່ນຄຳຮ້ອງຢ່າງເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນ ໃນກໍລະນີຕອບປະຕິເສດຕໍ່ຄຳຮ້ອງດັ່ງກ່າວ.

**ມາດຕາ 8. ການຕອບຮັບຄຳຮ້ອງ ແລະ ກວດກາສິນຄ້າເປົ້າໝາຍ**

ພາຍໃນກຳນົດ 3 (ສາມ) ວັນ ໂດຍບໍ່ນັບວັນພັກທາງລັດຖະການ ນັບແຕ່ວັນທີທີ່ລັດຖະການພາສີໄດ້ຮັບຄຳຮ້ອງຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 6 ຂອງບົດແນະນຳສະບັບນີ້, ລັດຖະການພາສີ ຕ້ອງອອກແຈ້ງການໃຫ້ເຈົ້າໜ້າທີ່ພາສີບ່ອນນຳເຂົ້າ ຫຼື ສົ່ງອອກສິນຄ້າພ້ອມທັງຄັດຕິດເອກະສານປະກອບ ເພື່ອດຳເນີນການກວດກາສິນຄ້າເປົ້າໝາຍ. ພາຍຫຼັງທີ່ໄດ້ຮັບແຈ້ງການ ແລະ ຄຳຮ້ອງພ້ອມດ້ວຍເອກະສານແລ້ວ, ເຈົ້າໜ້າທີ່ພາສີ ຕ້ອງທຳການກວດກາສິນຄ້າດັ່ງກ່າວໂດຍທັນທີ.

**ມາດຕາ 9. ການຍຶດສິນຄ້າ**

ເມື່ອກວດກາພົບເຫັນ ສິນຄ້າເປົ້າໝາຍຕາມທີ່ໄດ້ລະບຸໄວ້ໃນຄຳຮ້ອງ, ເຈົ້າໜ້າທີ່ພາສີຕ້ອງຍຶດສິນຄ້າໂດຍທັນທີ ແລ້ວຢ່າງເປັນລາຍລັກອັກສອນກ່ຽວກັບການຍຶດສິນຄ້າດັ່ງກ່າວ ພາຍໃນ 24 ຊົ່ວໂມງ ໃຫ້ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກທີ່ກ່ຽວຂ້ອງ ແລະ ຜູ້ຮ້ອງຂໍ ພ້ອມດຽວກັນນັ້ນຕ້ອງໄດ້ສົ່ງສຳເນົາ 01 ສະບັບໃຫ້ກົມພາສີ ຫຼື ພາສີປະຈຳເຂດເພື່ອຊາບ.

**ມາດຕາ 10. ການວາງເງິນຄ້ຳປະກັນເພີ່ມເຕີມ**

ໃນກໍລະນີທີ່ມີການຍຶດສິນຄ້າຫຼາຍຈຸດ ຕາມຄຳຮ້ອງສະບັບດຽວກັນນີ້, ລັດຖະການພາສີ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ເພື່ອໃຫ້ວາງເງິນຄ້ຳປະກັນເພີ່ມເຕີມ ຕາມຈຳນວນທີ່ມີການຍຶດສິນຄ້າ ໃນຈຳນວນເງິນທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂໍ້ 6 ຂອງບົດແນະນຳສະບັບນີ້ ພາຍໃນກຳນົດ 2 ວັນ ໂດຍບໍ່ນັບວັນພັກທາງລັດຖະການ ນັບແຕ່ວັນທີທີ່ກົມພາສີ ຫຼື ພາສີປະຈຳເຂດ ແຈ້ງໃຫ້ຜູ້ຮ້ອງຂໍຊາບເປັນຕົ້ນໄປ. ຖ້າວ່າຜູ້ຮ້ອງ

ຂໍບໍ່ໄດ້ວາງເງິນຄ້ຳປະກັນພາຍໃນເວລາກຳນົດໄວ້, ເຈົ້າໜ້າທີ່ພາສີຈະໄດ້ດຳເນີນການ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍພາສີ.

### ມາດຕາ 11. ການຮ້ອງຟ້ອງ

ພາຍຫຼັງທີ່ໄດ້ຮັບການແຈ້ງ ຈາກເຈົ້າໜ້າທີ່ພາສີກ່ຽວກັບການຍຶດສິນຄ້າ ຜູ້ຮ້ອງຂໍຕ້ອງຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນທີ່ມີສິດອຳນາດ ເພື່ອດຳເນີນຄະດີຕໍ່ເຈົ້າຂອງສິນຄ້າ ກຳນົດບໍ່ເກີນ 10 (ສິບ) ວັນ ໂດຍບໍ່ນັບວັນພັກທາງລັດຖະການ.

### ມາດຕາ 12. ໄລຍະເວລາການຍຶດສິນຄ້າ

ເຈົ້າໜ້າທີ່ພາສີມີສິດຍຶດສິນຄ້າເປົ້າໝາຍໄວ້ 10 (ສິບ) ວັນ ໂດຍບໍ່ນັບວັນພັກລັດຖະການ, ຖ້າເກີນກຳນົດເວລາດັ່ງກ່າວ ເຈົ້າໜ້າທີ່ພາສີມີສິດຍຶດສິນຄ້າຕໍ່ຕື່ມອີກກໍ່ໄດ້ ແຕ່ຕ້ອງມີຫຼັກຖານການຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນຈາກຜູ້ຮ້ອງຂໍ.

ໃນກໍລະນີຈຳເປັນດ້ານການເກັບຮັກສາ, ເຈົ້າຂອງສິນຄ້າ, ຜູ້ນຳເຂົ້າ, ຜູ້ສົ່ງອອກ ຫຼື ຜູ້ຮັບສິນຄ້າມີສິດຂໍນຳເອົາສິນຄ້າ ອອກໄປເກັບຮັກສາໄວ້ຢູ່ສາງຂອງຕົນ ຫຼື ສະຖານທີ່ອື່ນທີ່ເໝາະສົມ ຕາມການພິຈາລະນາຂອງເຈົ້າໜ້າທີ່ພາສີ ໂດຍສົມທົບກັບຜູ້ຮ້ອງຂໍ ແຕ່ຕ້ອງໄດ້ວາງເງິນຄ້ຳປະກັນໃນມູນຄ່າເທົ່າກັບຮ້ອຍຊາວສ່ວນຮ້ອຍຂອງຄ່າພາສີ ແລະ ພັນທະອື່ນໆທີ່ຕ້ອງໄດ້ຊຳລະ ແລະ ສິນຄ້າດັ່ງກ່າວ ຍັງຕົກຢູ່ໃນການຄຸ້ມຄອງຂອງເຈົ້າໜ້າທີ່ ເພື່ອຮັບປະກັນບໍ່ໃຫ້ເອົາສິນຄ້າດັ່ງກ່າວອອກໄປຈຳໜ່າຍ.

### ມາດຕາ 13. ສິດໃນການເຂົ້າກວດເບິ່ງສິນຄ້າທີ່ຍຶດໄວ້

ໃນໄລຍະເວລາທີ່ມີການຍຶດສິນຄ້າໄວ້ຢູ່ນັ້ນ ຜູ້ນຳເຂົ້າ, ຜູ້ສົ່ງອອກ, ຜູ້ຮ້ອງຂໍ ຫຼື ເຈົ້າຂອງສິດມີສິດເຂົ້າກວດເບິ່ງສິນຄ້າທີ່ຍຶດຢູ່ນັ້ນໄດ້ ເພື່ອຊອກຫາຂໍ້ມູນ ແລະ ຫຼັກຖານເພີ່ມເຕີມໃນການດຳເນີນຄະດີ.

## ໝວດທີ III
## ການປະຕິບັດຄຳຕັດສິນຂອງສານ

### ມາດຕາ 14. ກໍລະນີມີການຮ້ອງຟ້ອງຕໍ່ສານ

ເມື່ອມີຄຳຕັດສິນຂອງສານປະຊາຊົນວ່າ ສິນຄ້າທີ່ເຈົ້າໜ້າທີ່ພາສີຍຶດໄວ້ນັ້ນ ແມ່ນສິນຄ້າທີ່ລະເມີດເຄື່ອງໝາຍການຄ້າ ຫຼື ສິນຄ້າທີ່ລະເມີດລິຂະສິດ; ເຈົ້າຂອງສິນຄ້າ ຕ້ອງຖືກປັບໃໝຕາມລະບຽບກົດໝາຍຂອງພາສີ. ນອກຈາກນັ້ນແລ້ວ ເຈົ້າຂອງສິນຄ້າຕ້ອງໄດ້ຈ່າຍຄ່າຊົດເຊີຍອື່ນໆ ຕາມຄຳຕັດສິນຂອງສານ,

ຖ້າມີເງິນຄ້ຳປະກັນຈາກເຈົ້າຂອງສິນຄ້າ ຕາມມາດຕາ 12 ວັກ 2 ຂອງບົດແນະນຳສະບັບນີ້, ໃຫ້ເຈົ້າໜ້າທີ່ພາສີນຳໃຊ້ເງິນຄ້ຳປະກັນຂອງເຈົ້າຂອງສິນຄ້າ ມາຈ່າຍຄ່າຊົດເຊີຍ ແລະ ຄ່າເສັຍຫາຍອື່ນໆ ສ່ວນເງິນທີ່ເຫຼືອຈາກຄ່າຊົດເຊີຍ ຕ້ອງສົ່ງຄືນໃຫ້ແກ່ເຈົ້າຂອງສິນຄ້າ.

ເມື່ອມີຄຳຕັດສິນຂອງສານປະຊາຊົນວ່າສິນຄ້າທີ່ເຈົ້າໜ້າທີ່ພາສີຍຶດໄວ້ນັ້ນ ບໍ່ແມ່ນສິນຄ້າທີ່ລະເມີດເຄື່ອງໝາຍການຄ້າ ຫຼື ບໍ່ແມ່ນສິນຄ້າທີ່ລະເມີດລິຂະສິດ, ໃຫ້ເຈົ້າໜ້າທີ່ພາສີ ນຳເອົາເງິນຄ້ຳປະກັນຂອງຜູ້ຮ້ອງຂໍມາຈ່າຍຄ່າຊົດເຊີຍ ແລະ ຄ່າເສັຍຫາຍອື່ນໆ ອັນເປັນຜົນເນື່ອງຈາກການຍຶດສິນຄ້າຕາມຄຳຕັດສິນຂອງສານສ່ວນເງິນທີ່ເຫຼືອຈາກຄ່າຊົດເຊີຍຈະຖືກສົ່ງຄືນແກ່ຜູ້ຮ້ອງຂໍ.

**ມາດຕາ 15. ກໍລະນີບໍ່ມີການຮ້ອງຟ້ອງຕໍ່ສານ**

ເມື່ອມີການຍຶດສິນຄ້າ, ພາຍໃນກຳນົດ 10 (ສິບ) ວັນ ໂດຍບໍ່ນັບວັນພັກທາງລັດຖະການ, ຜູ້ຮ້ອງຂໍຕ້ອງຮ້ອງຟ້ອງຕໍ່ສານປະຊາຊົນ, ຖ້າກາຍກຳນົດດັ່ງກ່າວຫາກບໍ່ມີການຮ້ອງຟ້ອງ ເຈົ້າໜ້າທີ່ພາສີຈະປ່ອຍສິນຄ້າອອກໂດຍທັນທີ ແລ້ວຈະນຳເອົາເງິນຄ້ຳປະກັນ ຂອງຜູ້ຮ້ອງຂໍມາຈ່າຍຄ່າຊົດເຊີຍ ແລະ ຄ່າເສັຍຫາຍອື່ນໆ ອັນເປັນຜົນເນື່ອງມາຈາກການຍຶດສິນຄ້າ ໃຫ້ເຈົ້າຂອງສິນຄ້າ.

ໃນກໍລະນີມີການຄ້ຳປະກັນຂອງເຈົ້າຂອງສິນຄ້າ ຕາມມາດຕາ 12 ວັກ 2 ຂອງບົດແນະນຳສະບັບນີ້, ຖ້າເປັນການນຳເຂົ້າ ເພື່ອຊົມໃຊ້ທີ່ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນໆ ໃຫ້ເຈົ້າໜ້າທີ່ພາສີຫັກເອົາຄ່າພາສີ ແລະ ພັນທະອື່ນໆ ອອກແລ້ວມອບເຂົ້າງົບປະມານແຫ່ງຊາດ ສ່ວນເງິນທີ່ເຫຼືອຈະຖືກສົ່ງຄືນແກ່ເຈົ້າຂອງສິນຄ້າ.

**ມາດຕາ 16. ການຮ້ອງຟ້ອງຄ່າຊົດເຊີຍ**

ຖ້າຄ່າຊົດເຊີຍຫາກບໍ່ພຽງພໍ ກັບຄ່າເສັຍຫາຍທີ່ເກີດຂຶ້ນ, ຜູ້ຮ້ອງຂໍ ຫຼື ເຈົ້າຂອງສິນຄ້າມີສິດຮ້ອງຟ້ອງຕໍ່ສານປະຊາຊົນເພື່ອຂໍຄ່າຊົດເຊີຍເພີ່ມເຕີມ.

**ມາດຕາ 17. ການຖອນຄຳຮ້ອງຟ້ອງ**

ໃນກໍລະນີທີ່ມີການສົມຍອມຄະດີ, ຜູ້ຮ້ອງຟ້ອງມີສິດຖອນຄຳຮ້ອງຟ້ອງກ່ອນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນ.

## ໝວດທີ IV

## ບົດບັນຍັດສຸດທ້າຍ

**ມາດຕາ 18. ການປະຕິບັດຕໍ່ສິນຄ້າທີ່ລະເມີດ**

ສິນຄ້າທີ່ລະເມີດເຄື່ອງໝາຍການຄ້າ ຫຼື ສິນຄ້າທີ່ລະເມີດລິຂະສິດ ຕ້ອງຖືກທຳລາຍຕາມຄຳຕັດສິນຂອງສານປະຊາຊົນ, ສ່ວນຄ່າໃຊ້ຈ່າຍໃນການທຳລາຍໃຫ້ປະຕິບັດຕາມຄຳຕັດສິນຂອງສານປະຊາຊົນ.

**ມາດຕາ 19. ສິດຮ້ອງທຸກ**

ບຸກຄົນ ຫຼື ນິຕິບຸກຄົນ ມີສິດຍື່ນຄຳຮ້ອງເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 20. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມພາສີປະສານສົມທົບກັບຜູ້ປະກອບການ ແລະ ຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດບົດແນະນຳສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 21. ຜົນສັກສິດ**

ບົດແນະນຳສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ພູເພັດ ຄຳພູນວົງ